ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====-----

ຄະນະກໍາມະການຄຸ້ມຄອງຫຼັກຊັບ ເລກທີ 008 /ຄລຕ
ແລະ ຕະຫຼາດຫຼັກຊັບ ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ2010

# ຂໍ້ຕົກລົງວ່າດ້ວຍລະບຽບກ່ຽວກັບ ການອອກ ແລະ ສະເໜີຂາຍຮຸ້ນຕໍ່ມວນຊົນ

- ອີງຕາມດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 051/ນຍ ລົງວັນທີ 25 ພຶດສະພາ 2009.

**ຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕົກລົງອອກລະບຽບ:**

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ລະບຽບສະບັບນີ້ ຜັນຂະຫຍາຍ ພາກທີ III ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010 ຊຶ່ງກໍານົດຫຼັກການ, ຂັ້ນຕອນໃນການອອກ, ສະເໜີຂາຍຮຸ້ນຄັ້ງທໍາອິດ ແລະ ການອອກຮຸ້ນເພີ່ມເຕີມຂອງບໍລິສັດ ແນໃສ່ຮັບປະກັນການລະດົມທຶນໄລຍະຍາວຈາກມວນຊົນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ, ຍຸຕິທໍາ ແລະ ມີປະສິດທິຜົນ.

### ມາດຕາ 2. ບໍລິສັດອອກຮຸ້ນ

ບໍລິສັດອອກຮຸ້ນ ແມ່ນນິຕິບຸກຄົນໜຶ່ງທີ່ໄດ້ຮັບອະນຸຍາດຈາກສໍານັກງານ ຄລຕ ໃນການນໍາເອົາຮຸ້ນຂອງຕົນສະເໜີຂາຍຕໍ່ມວນຊົນ. ບໍລິສັດອອກຮຸ້ນອາດເປັນ ຫຼື ບໍ່ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

### ມາດຕາ 3. ຂອບເຂດການນຳໃຊ້

ລະບຽບສະບັບນີ້ ມີຜົນບັງຄັບໃຊ້ຕໍ່ບໍລິສັດອອກຮຸ້ນ, ບໍລິສັດຫຼັກຊັບທີ່ໃຫ້ການຄ້ຳປະກັນການຂາຍຫຼັກຊັບ ແລະ ໃຫ້ຄຳປຶກສາທາງດ້ານການເງິນໃຫ້ກັບບໍລິສັດອອກຮຸ້ນ ທີ່ຕັ້ງຢູ່ ສປປ ລາວ ລວມທັງພະນັກງານຂອງບໍລິສັດດັ່ງກ່າວ.

## ໝວດທີ II
## ການອອກຮຸ້ນ

### ມາດຕາ 4. ການອອກຮຸ້ນ

ການອອກຮຸ້ນຂອງບໍລິສັດ ປະກອບມີ:

1. ການອອກຮຸ້ນຄັ້ງທຳອິດ ເພື່ອລະດົມທຶນຈາກມວນຊົນ ແລະ ປ່ຽນແປງໂຄງສ້າງການຖືຮຸ້ນຂອງຜູ້ຖືຮຸ້ນ;
2. ການອອກຮຸ້ນເພີ່ມ ເພື່ອເພີ່ມທຶນຈົດທະບຽນ, ຂະຫຍາຍກິດຈະການ, ຈ່າຍຮຸ້ນປັນຜົນ ຫຼື ຈ່າຍໃບນັດເປັນຮຸ້ນ.

### ມາດຕາ 5. ປະເພດຮຸ້ນ

ຮຸ້ນໃນລະບຽບສະບັບນີ້ ປະກອບດ້ວຍ: ຮຸ້ນສາມັນ, ຮຸ້ນບູລິມະສິດ ແລະ ສິດໃນການຊື້ຮຸ້ນ.

ສິດໃນການຊື້ຮຸ້ນ ໝາຍເຖິງສິດທີ່ບໍລິສັດອອກຮຸ້ນໃຫ້ກັບຜູ້ຊື້ຮຸ້ນ ເພື່ອຈັບຈ່ອງຊື້ຮຸ້ນໃນວັນ ແລະ ລາຄາທີ່ໄດ້ກຳນົດໄວ້ລ່ວງໜ້າ.

### ມາດຕາ 6. ເງື່ອນໄຂການອອກຮຸ້ນ

ບໍລິສັດທີ່ມີຈຸດປະສົງອອກຮຸ້ນ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໃນມາດຕາ 15 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ. ນອກຈາກນີ້ ຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີລາຍຮັບປີສຸດທ້າຍກ່ອນຍື່ນສຳນວນຄຳຮ້ອງຂໍອອກຮຸ້ນ ບໍ່ໃຫ້ຫຼຸດໜຶ່ງຕື້ກີບ (1 ຕື້ກີບ), ບໍ່ມີຂາດທຶນສະສົມ, ການດຳເນີນທຸລະກິດໃນໜຶ່ງປີ (1 ປີ) ຜ່ານມາມີກຳໄລສຸດທິ;
2. ໄດ້ຮັບການກວດສອບຈາກບໍລິສັດກວດສອບພາຍນອກສາມປີ (3 ປີ) ຄືນຫຼັງກ່ອນປີຍື່ນສຳນວນຄຳຮ້ອງຂໍອອກຮຸ້ນ, ບໍລິສັດກວດສອບພາຍນອກຕ້ອງເປັນບໍລິສັດທີ່ໄດ້ຮັບການຮັບຮອງຈາກສຳນັກງານ ຄລຕ;
3. ມີແຜນການຂາຍຮຸ້ນຕໍ່ມວນຊົນ ແລະ ແຜນການນຳໃຊ້ທຶນທີ່ລະດົມມາໄດ້ ຊຶ່ງຜ່ານການຮັບຮອງຈາກສະພາບໍລິຫານ;
4. ມີຂໍ້ຕົກລົງຂອງກອງປະຊຸມຜູ້ຖືຮຸ້ນກ່ຽວກັບການອອກຮຸ້ນ;

5. ຕ້ອງມີການຄໍ້າປະກັນການຂາຍຈາກບໍລິສັດຫຼັກຊັບ ທີ່ໄດ້ຮັບການຮັບຮອງຈາກສໍານັກງານ ຄລຕ;
6. ການອອກຮຸ້ນໃນແຕ່ລະຄັ້ງບໍ່ໃຫ້ເກີນສິບເທົ່າ (10 ເທົ່າ) ຂອງທຶນຈົດທະບຽນ;
7. ເງື່ອນໄຂອື່ນໆ ຕາມທີ່ສໍານັກງານ ຄລຕ ກໍານົດອອກໃນແຕ່ລະໄລຍະ.

## ມາດຕາ 7. ສໍານວນຄໍາຮ້ອງຂໍອອກຮຸ້ນ

ການປະກອບສໍານວນຄໍາຮ້ອງຂໍອອກຮຸ້ນຄັ້ງທໍາອິດ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໃນມາດຕາ 16 ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ສໍານວນຄໍາຮ້ອງຂໍອອກຮຸ້ນເພີ່ມ ມີດັ່ງນີ້:

1. ໃບຄໍາຮ້ອງຂໍອອກຮຸ້ນ ຕາມແບບພິມທີ່ສໍານັກງານ ຄລຕ ກໍານົດ;
2. ມະຕິຂອງກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບການອະນຸມັດການອອກຮຸ້ນເພີ່ມ ແລະ ການສະເໜີຂາຍຮຸ້ນເພີ່ມຕໍ່ມວນຊົນ;
3. ໜັງສືຊວນຊື້;
4. ສັນຍາການຄໍ້າປະກັນການຂາຍຮຸ້ນ ກັບບໍລິສັດຫຼັກຊັບ;
5. ແຜນການເຄື່ອນໄຫວທຸລະກິດ ແລະ ຄາດຄະເນຖານະການເງິນ;
6. ບົດລາຍງານແຜນການນໍາໃຊ້ຮຸ້ນເກົ່າ ແລະ ແຜນການນໍາໃຊ້ຮຸ້ນເພີ່ມ;
7. ເອກະສານອື່ນໆ ຕາມການກໍານົດຂອງສໍານັກງານ ຄລຕ.

## ມາດຕາ 8. ໜັງສືຊວນຊື້

ໜັງສືຊວນຊື້ ຕ້ອງມີຊື່ບໍລິສັດຄໍ້າປະກັນການຂາຍ ແລະ ມີເນື້ອໃນຄົບຖ້ວນຕາມທີ່ໄດ້ກໍານົດໃນມາດຕາ 17 ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ເນື້ອໃນຂອງໜັງສືຊວນຊື້ ຕ້ອງເປັນຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນ ຊຶ່ງຂໍ້ມູນທາງດ້ານການເງິນຕ້ອງເປັນຂໍ້ມູນດຽວກັນກັບຂໍ້ມູນທີ່ໄດ້ຮັບການຢັ້ງຢືນຈາກຜູ້ກວດສອບພາຍນອກ.

ໜັງສືຊວນຊື້ ຕ້ອງມີລາຍເຊັນຮັບຮອງຂອງປະທານສະພາບໍລິຫານ, ຜູ້ອໍານວຍການ, ຝ່າຍກວດກາ ແລະ ຝ່າຍບັນຊີຂອງບໍລິສັດອອກຮຸ້ນ; ແລະ ລາຍເຊັນຮັບຮອງຂອງບໍລິສັດຫຼັກຊັບທີ່ເປັນຜູ້ໃຫ້ການຄໍ້າປະກັນການຂາຍຫຼັກຊັບ ແລະ ເປັນທີ່ປຶກສາທາງດ້ານການເງິນ.

## ມາດຕາ 9. ການພິຈາລະນາສໍານວນຄໍາຮ້ອງ

ການພິຈາລະນາສໍານວນຄໍາຮ້ອງຂໍອອກຮຸ້ນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໃນມາດຕາ 18 ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

**ມາດຕາ 10. ຄ່າທຳນຽມ**

ບໍລິສັດທີ່ມີຈຸດປະສົງອອກ ແລະ ສະເໜີຂາຍຮຸ້ນຕໍ່ມວນຊົນ ຕ້ອງເສຍຄ່າທຳນຽມ ດັ່ງນີ້:

1. ຍື່ນສຳນວນຄຳຮ້ອງຂໍອອກຮຸ້ນ ຈຳນວນສິບຫ້າລ້ານກີບ (15 ລ້ານກີບ) ແລະ ຕ້ອງຊຳລະເງິນພາຍໃນວັນທີ່ຍື່ນສຳນວນຄຳຮ້ອງ;
2. ໃບອະນຸຍາດອອກຮຸ້ນ ຈຳນວນສູນຈຸດສູນສາມສ່ວນຮ້ອຍ (0,03%) ຂອງມູນຄ່າຮຸ້ນທີ່ຂໍອອກ ແຕ່ບໍ່ໃຫ້ຕ່ຳກວ່າສາມສິບລ້ານກີບ (30 ລ້ານກີບ) ແລະ ຕ້ອງຊຳລະເງິນໃນວັນທີ່ໄດ້ຮັບໃບອະນຸຍາດໃຫ້ອອກຮຸ້ນ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນສິບລ້ານກີບ (10 ລ້ານກີບ) ຍົກເວັ້ນປີທີ່ອອກຮຸ້ນ ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປ.

## ໝວດທີ III
## ການສະເໜີຂາຍຮຸ້ນຕໍ່ມວນຊົນ

**ມາດຕາ 11. ການຄ້ຳປະກັນການຂາຍຮຸ້ນ**

ບໍລິສັດອອກຮຸ້ນທີ່ມີຈຸດປະສົງສະເໜີຂາຍຮຸ້ນຕໍ່ມວນຊົນແຕ່ລະຄັ້ງ ຕ້ອງເຮັດສັນຍາຄ້ຳປະກັນການຂາຍຮຸ້ນ ກັບບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ.

ກໍລະນີມີຫຼາຍບໍລິສັດຫຼັກຊັບ ທີ່ເຮັດສັນຍາຄ້ຳປະກັນການຂາຍຮຸ້ນໃຫ້ບໍລິສັດອອກຮຸ້ນໃດໜຶ່ງ, ບໍລິສັດຫຼັກຊັບເຫຼົ່ານັ້ນ ຕ້ອງມີສັນຍາຮ່ວມກັນໃນການຄ້ຳປະກັນການຂາຍຮຸ້ນ ໂດຍກຳນົດບໍລິສັດຫຼັກຊັບໃດໜຶ່ງເປັນຜູ້ຕາງໜ້າໃນການເຮັດສັນຍາດັ່ງກ່າວກັບບໍລິສັດອອກຮຸ້ນ.

**ມາດຕາ 12. ການໂຄສະນາຂາຍຮຸ້ນ**

ການໂຄສະນາຂາຍຮຸ້ນ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໃນມາດຕາ 21 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ. ບໍລິສັດອອກຮຸ້ນ ແລະ ບໍລິສັດຫຼັກຊັບ ຕ້ອງກຳນົດລາຄາຂາຍຮຸ້ນຮ່ວມກັນ ແລະ ໃຫ້ສຳເລັດພາຍໃນກຳນົດຫົກສິບວັນ (60 ວັນ) ນັບແຕ່ວັນທີ່ໄດ້ຮັບອະນຸຍາດອອກຮຸ້ນເປັນຕົ້ນໄປ. ລາຄາຂາຍຮຸ້ນດັ່ງກ່າວຕ້ອງແຈ້ງ ຕໍ່ສຳນັກງານ ຄລຕ ເພື່ອຊາບ ແລະ ອະນຸຍາດການຂາຍ.

**ມາດຕາ 13. ການຂາຍຮຸ້ນ**

ການຂາຍຮຸ້ນ ປະກອບດ້ວຍການຈອງຊື້ຮຸ້ນ, ການໂອນເງິນ, ການແບ່ງປັນຮຸ້ນ ແລະ ການອອກປຶ້ມບັນຊີຫຼັກຊັບ.

ບໍລິສັດຫຼັກຊັບທີ່ຄໍ້າປະກັນການຂາຍ ຕ້ອງດໍາເນີນການເປີດຈ່ອງຊື້ຮຸ້ນຈາກນັກລົງທຶນ ແລະ ປະກາດໃຫ້ນັກລົງທຶນຮັບຊາບກ່ຽວກັບໄລຍະເວລາການຈ່ອງຢ່າງຈະແຈ້ງ ແລະ ທົ່ວເຖິງ.

ເວລາເປີດຈ່ອງຊື້ຮຸ້ນ ນັກລົງທຶນຕ້ອງໂອນເງິນມັດຈໍາໃຫ້ຄົບຖ້ວນຕາມມູນຄ່າຮຸ້ນທີ່ຕົນສັ່ງຈ່ອງ ເຂົ້າໃນບັນຊີສະເພາະຂອງບໍລິສັດອອກຮຸ້ນທີ່ເປີດຢູ່ທະນາຄານທຸລະກິດໃດໜຶ່ງໃນ ສປປ ລາວ ແລະ ແຈ້ງຜົນກ່ຽວກັບການໂອນເງິນມັດຈໍາໃຫ້ບໍລິສັດຫຼັກຊັບຊາບ.

ພາຍຫຼັງສໍາເລັດການຈ່ອງ ບໍລິສັດຫຼັກຊັບຕ້ອງດໍາເນີນການແບ່ງປັນຮຸ້ນໃຫ້ຜູ້ຈ່ອງຊື້ຮຸ້ນຕາມອັດຕາສ່ວນຂອງການຈ່ອງຊື້ ຢ່າງທົ່ວເຖິງ ແລະ ຍຸຕິທໍາ.

ການຈ່ອງ ແລະ ຂາຍຮຸ້ນທັງໝົດ ຕ້ອງດໍາເນີນໃຫ້ສໍາເລັດພາຍໃນກໍານົດເກົ້າສິບວັນ (90 ວັນ) ນັບແຕ່ວັນທີ່ໄດ້ຮັບອະນຸຍາດໃຫ້ຂາຍຮຸ້ນຈາກສໍານັກງານ ຄລຕ ເປັນຕົ້ນໄປ ແລະ ຕ້ອງຂາຍໃຫ້ສໍາເລັດຢ່າງໜ້ອຍແປດສິບສ່ວນຮ້ອຍ (80%) ຂອງຈໍານວນຮຸ້ນທີ່ໄດ້ຮັບອະນຸຍາດໃຫ້ອອກທັງໝົດ.

ກໍລະນີການຂາຍຮຸ້ນຫາກຕໍ່າກວ່າແປດສິບສ່ວນຮ້ອຍ (80%) ບໍລິສັດຫຼັກຊັບສາມາດສະເໜີຕໍ່ສໍານັກງານ ຄລຕ ເພື່ອຂໍຕໍ່ເວລາຂາຍຕື່ມອີກໄດ້ ແຕ່ບໍ່ເກີນສາມສິບວັນ (30 ວັນ) ແລະ ຕ້ອງສະເໜີກ່ອນວັນໝົດກໍານົດຢ່າງໜ້ອຍສິບວັນ (10 ວັນ) ພ້ອມທັງຈໍານວນຮຸ້ນທີ່ຍັງເຫຼືອ ແລະ ເຫດຜົນຢ່າງຈະແຈ້ງ.

ບໍລິສັດຫຼັກຊັບ ຕ້ອງລາຍງານຜົນຂອງການຂາຍຮຸ້ນໃຫ້ສໍານັກງານ ຄລຕ ຊາບຢ່າງເປັນລາຍລັກອັກສອນພາຍໃນກໍານົດສິບວັນ (10 ວັນ) ນັບແຕ່ວັນສິ້ນສຸດການຂາຍຮຸ້ນເປັນຕົ້ນໄປ.

ບໍລິສັດຫຼັກຊັບ ຕ້ອງອອກປື້ມບັນຊີຫຼັກຊັບໃຫ້ແກ່ຜູ້ຊື້ຮຸ້ນພາຍໃນສາມສິບວັນ (30 ວັນ) ຫຼັງຈາກທີ່ສິ້ນສຸດການຂາຍຮຸ້ນ ແລະ ໄດ້ຮັບການຢັ້ງຢືນຈາກສໍານັກງານ ຄລຕ ກ່ຽວກັບຜົນສໍາເລັດຂອງການຂາຍ.

ກໍລະນີຜູ້ຈ່ອງຊື້ຮຸ້ນ ບໍ່ໄດ້ຮັບການແບ່ງປັນຮຸ້ນຕາມຈໍານວນທີ່ຕົນຈ່ອງທັງໝົດ ຫຼື ບາງສ່ວນ, ບໍລິສັດຫຼັກຊັບ ແລະ ບໍລິສັດອອກຮຸ້ນ ຕ້ອງສົ່ງເງິນມັດຈໍາທັງໝົດ ຫຼື ສ່ວນທີ່ເຫຼືອໃຫ້ຜູ້ຈ່ອງຄືນ ພາຍໃນສອງວັນ (2 ວັນ) ລັດຖະການ ຫຼັງຈາກສິ້ນສຸດການຂາຍ.

**ມາດຕາ 14. ການໂຈະ ແລະ ການຍົກເລີກການສະເໜີຂາຍຮຸ້ນ**

ການໂຈະ ແລະ ການຍົກເລີກການສະເໜີຂາຍຮຸ້ນ ຕ້ອງປະຕິບັດຕາມທີ່ໄດ້ກໍານົດໃນມາດຕາ 24 ແລະ 25 ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ນອກຈາກນີ້ ສຳນັກງານ ຄລຕ ມີສິດຍົກເລີກການສະເໜີຂາຍຮຸ້ນ ໃນກໍລະນີ ດັ່ງນີ້:

1. ຂາຍຮຸ້ນໄດ້ຕ່ຳກ່ວາແປດສິບສ່ວນຮ້ອຍ (80%) ຂອງມູນຄ່າຮຸ້ນທີ່ໄດ້ຮັບອະນຸຍາດໃຫ້ອອກພາຍໃນເວລາທີ່ກຳນົດໄວ້;
2. ຕາມການສະເໜີຂອງບໍລິສັດອອກຮຸ້ນ ໂດຍອີງຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ຊຶ່ງບໍ່ໃຫ້ເກີນຫ້າວັນ (5 ວັນ) ນັບແຕ່ມະຕິກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາເປັນຕົ້ນໄປ;
3. ຕາມຄຳສັ່ງຂອງສານ;
4. ກໍລະນີອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

### ມາດຕາ 15. ຂໍ້ຫ້າມ

ຫ້າມບໍລິສັດອອກຮຸ້ນ ແລະ ບໍລິສັດຫຼັກຊັບທີ່ຄ້ຳປະກັນການອອກ ແລະ ສະເໜີຂາຍຮຸ້ນ ດຳເນີນການໃດໜຶ່ງ ດັ່ງນີ້:

1. ໂຄສະນາຂາຍຮຸ້ນກ່ອນໄດ້ຮັບອະນຸຍາດໃຫ້ອອກຮຸ້ນ ຈາກສຳນັກງານ ຄລຕ ຫຼື ໂຄສະນາຂາຍຮຸ້ນບໍ່ສອດຄ່ອງກັບເນື້ອໃນທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້;
2. ສ້າງຂ່າວລືຕ່າງໆ ເພື່ອເຮັດໃຫ້ຮຸ້ນມີລາຄາສູງ ຫຼື ຕ່ຳກວ່າຄວາມເປັນຈິງ ຊຶ່ງສົ່ງຜົນກະທົບຕໍ່ການຕັດສິນໃຈຂອງຜູ້ຊື້ຮຸ້ນ;
3. ນຳໃຊ້ເງິນມັດຈຳຂອງຜູ້ຈ່ອງຊື້ຮຸ້ນທີ່ຢູ່ໃນບັນຊີສະເພາະຂອງບໍລິສັດອອກຮຸ້ນກ່ອນໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ;
4. ຂາຍຮຸ້ນກ່ອນໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ;
5. ຂາຍຮຸ້ນເກີນກວ່າຈຳນວນທີ່ໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ;
6. ອອກຮຸ້ນເພີ່ມເຕີມໂດຍບໍ່ໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ;
7. ຂາຍຮຸ້ນ ຫຼື ອອກຫຼັກຊັບປະເພດອື່ນທີ່ບໍ່ໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ;
8. ຂໍ້ຫ້າມອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 16. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບການສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ໃນຂົງເຂດວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບການສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີທີ່ລະເມີດເປັນຄັ້ງທຳອິດ ແລະ ມີລັກສະນະເບົາບາງ ຈະຖືກກ່າວເຕືອນເປັນລາຍລັກອັກສອນ ຈາກສຳນັກງານ ຄລຕ;
2. ພາຍຫຼັງທີ່ຖືກກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ຫຼື ເປັນການລະເມີດຄັ້ງທຳອິດທີ່ມີລັກສະນະຮ້າຍແຮງ, ຜູ້ລະເມີດຈະຖືກປັບໃໝ ຕາມລະບຽບການທີ່ສຳນັກງານ ຄລຕ ວາງອອກ;
3. ຖ້າວ່າການລະເມີດດັ່ງກ່າວເປັນການກະທຳຜິດກົດໝາຍ ຜູ້ລະເມີດຈະຖືກດຳເນີນຄະດີຕາມກົດໝາຍ ຕາມກໍລະນີເບົາ ຫຼື ໜັກ.

**ໝວດທີ V**

**ບົດບັນຍັດສຸດທ້າຍ**

**ມາດຕາ 18. ການຈັດຕັ້ງປະຕິບັດ**

ສຳນັກງານ ຄລຕ ແລະ ພາກສ່ວນອື່ນໆ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 19. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນລະບຽບວ່າດ້ວຍການອອກຫຼັກຊັບວິສາຫະກິດ ສະບັບ ເລກທີ 07/ທຫລ ລົງວັນທີ 26 ພະຈິກ 2008.

ລະບຽບສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

ເຊັນຮັບຮອງແລ້ວ

ສົມສະຫວາດ ເລັ່ງສະຫັວດ

# ສາລະບານ


**ໝວດທີ I ບົດບັນຍັດທົ່ວໄປ..........1**

ມາດຕາ 1. ຈຸດປະສົງ..........1

ມາດຕາ 2. ບໍລິສັດອອກຮຸ້ນ..........1

ມາດຕາ 3. ຂອບເຂດການນຳໃຊ້..........2

**ໝວດທີ II ການອອກຮຸ້ນ..........2**

ມາດຕາ 4. ການອອກຮຸ້ນ..........2

ມາດຕາ 5. ປະເພດຮຸ້ນ..........2

ມາດຕາ 6. ເງື່ອນໄຂການອອກຮຸ້ນ..........2

ມາດຕາ 7. ສຳນວນຄຳຮ້ອງຂໍອອກຮຸ້ນ..........3

ມາດຕາ 8. ໜັງສືຊວນຊື້..........3

ມາດຕາ 9. ການພິຈາລະນາສຳນວນຄຳຮ້ອງ..........3

ມາດຕາ 10. ຄ່າທຳນຽມ..........4

**ໝວດທີ III ການສະເໜີຂາຍຮຸ້ນຕໍ່ມວນຊົນ..........4**

ມາດຕາ 11. ການຄ້ຳປະກັນການຂາຍຮຸ້ນ..........4

ມາດຕາ 12. ການໂຄສະນາຂາຍຮຸ້ນ..........4

ມາດຕາ 13. ການຂາຍຮຸ້ນ..........4

ມາດຕາ 14. ການໂຈະ ແລະ ການຍົກເລີກການສະເໜີຂາຍຮຸ້ນ..........5

ມາດຕາ 15. ຂໍ້ຫ້າມ..........6

**ໝວດທີ IV ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ..........6**

ມາດຕາ 16. ນະໂຍບາຍຕໍ່ຜູ້ມີຜົນງານ..........6

ມາດຕາ 17. ມາດຕະການຕໍ່ຜູ້ລະເມີດ..........7

**ໝວດທີ V ບົດບັນຍັດສຸດທ້າຍ..........7**

ມາດຕາ 18. ການຈັດຕັ້ງປະຕິບັດ..........7

ມາດຕາ 19. ຜົນສັກສິດ..........7